# ສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດໃນຊັ້ນ ມ 5 ທີ່ໂຮງ ຮຽນມັດທະຍົມສາທິດຄັງໄຂໃນສົກຮຽນ 2022-2023

**ເພັດສະໝອນ ພຸດສະດີ*, ປານີ ມາໄລສານ, ດາລາສິນ ບົວທາວົງ**

*ຫ້ອງການວິທະຍາສາດສັງຄົມ ວິທະຍາໄລຄູຄັງໄຂແຂວງຊຽງຂວາງ, ສປປ ລາວ*

**ຕິດຕໍ່ພົວພັນ: ເພັດສະໝອນພຸດສະດີ, ຫ້ອງການວິທະຍາສາດສັງຄົມ, ວິທະຍາໄລຄູຄັງໄຂ,Tel:+8562054717789; E-mail: phetsamonepsd@gmail.com*

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 20 ມີນາ 2023*

*ການປັບປຸງ: 20 ມີນາ 2024*

*ການຕອບຮັບ: 30 ມີນາ 2024*

## ບົດຄັດຫຍໍ້

ການວິໄຈໃນຄັ້ງນີ້ເປັນການວິໄຈກ່ຽວກັບ "ສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດໃນຊັ້ນ ມ5 ທີ່ໂຮງຮຽນມັດທະຍົມສາທິດຄັງໄຂໃນສົກຮຽນ2022-2023". ມີຈຸດປະສົງເພື່ອສຶກສາສະພາບການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດຊັ້ນ ມ 5 ທີ່ໂຮງຮຽນມັດທະຍົມສາທິດຄັງໄຂ ສົກຮຽນ 2022-2023. ການສຶກສາຄັ້ງນີ້ໄດ້ນໍາໃຊ້ແບບປະລິມານ, ກຸ່ມຕົວຢ່າງທີ່ໃຊ້ໃນການນັກຮຽນຊັ້ນ ມ 5 ເຊິ່ງມີຈໍານວນທັງໝົດ 25 ຄົນ, ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່ແບບສອບຖາມ, ສະຖິຕິທີ່ໃຊ້ໄດ້ແກ່ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ, ການວິເຄາະຂໍ້ມູນແມ່ນໄດ້ກໍານົດໃຊ້ຜົນການວິເຄາະຂໍ້ມູນສະແດງອອກດັ່ງນີ້:

ສະພາບການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດຊັ້ນ ມ5 ທີ່ໂຮງຮຽນມັດທະຍົມຕອນຕົ້ນສາທິດຄັງໄຂ ສົກຮຽນ 2022-2023 ໂດຍລວມທຸກດ້ານແມ່ນຢູ່ໃນລະດີ  ເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ =3.52) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD=0.43). ເມື່ອແຍກຕາມລາຍດ້ານແລ້ວສະແດງອອກຄື: ທັກສະການນໍາເຂົ້າສູ່ບົດຮຽນຂອງຄູ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບດີ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.88; SD=0.04). ທັກສະການຈັດກິດຈະກໍາຂອງຄູໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.32; SD=0.10). ທັກສະການໃຊ້ຄໍາຖາມຂອງຄູ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.34;SD=0.91). ທັກສະການນໍາໃຊ້ສື່ການຮຽນ-ການສອນໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ($\bar{X}$=3.42; SD=0.55). ທັກສະການສະຫຼຸບ ແລະ ການປະເມີນໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບດີ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ($\bar{X}$=3.63;SD=0.53).

**ຄໍາສໍາຄັນ:** *ສະພາບບັນຫາ, ການຈັດການຮຽນ-ການສອນ, ໂຮງຮຽນມັດທະຍົມ, ປະຫວັດສາດ.*

# The problem situation of teaching-learning management of teachers in the subject of history in the 5th gradeat the high school of demonstrationacademic year2022-2023

**Phetsamone PHOUTSADY*, Pany MALAYSAN, Dalasin BOUATHAVONG**
*Teacher at Khangkhay Teacher Training College, Lao PDR*

***Correspondence:**
*Phetsamone PHOUTSADY, Teacher at Khangkhay Teacher Training College Tel: +856 20 5471 7789; Email: phetsamonepsd@gmail.com*

***Article Info:***
*Submitted: Mar 20, 2023*
*Revised: Mar 20, 2024*
*Accepted: Mar 30, 2024*

**Abstract**

This research is about research the problem situation of teaching-learning management of teachers in the subject of history in the 5th gradeat the high school of demonstration academic year 2022-2023. The aim is to study the teaching-learning situation of the teachers in the history subject at the 5th gradeat the high school academic year2022-2023. This study used a quantitative method, Sample group used in 5th grade studentswhich has a total of 25 people, The instrument used in the research is a questionnaire, Statistics applicable to mean and standard deviation data analysis is defined using data analysis results as follows:

The teaching-learning situation of the teacher in the subject of historyin the 5thgradeat the high school of demonstration academic year 2022-2023 Overall, all aspects are in good conditionwhich has an average value equal to ($\bar{X}$=3.52) and the standard deviation is equal to (SD= 0.43). When separated according to the surface, it is expressed as the introduction skills of the teacher's lesson overall and separate items are at a good levelwhich is the mean, standard deviation is equal to ($\bar{X}$=3.88; SD=0.04) Teacher's activity management skillswhich is the mean, standard deviation is equal to ($\bar{X}$=3.32; SD=0.10). Teacher's questioning skillswhich is the mean, standard deviation is equal to ($\bar{X}$=3.34; SD=0.91). Skills in using teaching and learning mediawhich is the mean, standard deviation is equal to ($\bar{X}$=3.42; SD=0.55). Summarizing and evaluating skillswhich is the mean, standard deviation is equal to ($\bar{X}$=3.63; SD=0.53).

**Keywords:** *The problem situation, Teaching and learning management, High school, History*

## 1. ພາກສະເໜີ

ການສຶກສາເປັນສິ່ງສຳຄັນໃນການພັດທະນາຊັບພະຍາກອນມະນຸດອັນເປັນພື້ນຖານສຳຄັນຂອງການພັດທະນາສັງຄົມຜູ້ທີ່ໄດ້ຮັບການສຶກສາຈຶ່ງເປັນບຸກຄົນທີ່ມີຄຸນນະພາບແລະເປັນກຳລັງສຳຄັນໃນການພັດທະນາປະເທດຊາດ. ແຕ່ສະພາບປັດຈຸບັນ ຂອງປະເທດລາວ ກຳລັງປະເຊີນໜ້າກັບບັນຫາທາງດ້ານການສຶກສາການຮຽນ-ການສອນສ່ວນຫຼາຍແມ່ນຜູ້ສອນຍັງອາໄສການສອນຈາກຕຳລາບໍ່ໄດ້ເນັ້ນຂະບວນການສອນທີ່ໃຫ້ຜູ້ຮຽນໄດ້ພັດທະນາໃນດ້ານການວິເຄາະ, ການສະແດງຄວາມຄິດເຫັນແລະການສ້າງຄວາມຮູ້ດ້ວຍຕົນເອງຄູຜູ້ສອນມີບົດບາດແລະເປັນຜູ້ມີຄວາມສຳຄັນໃນການຖ່າຍທອດຄວາມຮູ້ຫຼາຍກວ່າການໃຫ້.

ການຈັດການຮຽນ-ການສອນຈຶ່ງມີຄວາມຈຳເປັນຢ່າງຍິ່ງຕໍ່ການສຶກສາໃນທຸກລະດັບການສຶກສາໃນສັງຄົມ. ການສອນຕ້ອງອີງໃສ່ຈຸດພິເສດ ແລະ ລະດັບຂອງຜູ້ຮຽນຮູ້ສ້າງເງື່ອນໄຂທີ່ເໝາະກັບຜູ້ຮຽນຮູ້,ການສອນມີທັງເທັກນິກ, ທັກສະ, ຄວາມສາມາດ ແລະ ຄວາມຊຳນານຂອງຜູ້ສອນ

ຈະເຮັດໃຫ້ຜູ້ຮຽນມີນະວັດຕະກຳໃໝ່(XAIYALERT, 2008).

ວິຊາ ປະຫວັດສາດ ເປັນວິທະຍາສາດຂະແໜງໜຶ່ງທີ່ສຳຄັນຄືກັບຂະແໜງວິຊາອື່ນໆ ແລະ ປະຫວັດສາດ ກໍ່ເປັນວິທະຍາສາດທີ່ຄົ້ນຄວ້າເຖິງການຂະຫຍາຍຕົວທັງໝົດຂອງມວນມະນຸດໃນສັງຄົມຕາມກາລະ ແລະ ເວລາ, ດ້ວຍເຫດນັ້ນ ປະຫວັດສາດ ຈຶ່ງມີຄວາມສຳຄັນຕໍ່ທຸກສັງຄົມໂດຍສະເພາະແມ່ນນັກຮຽນຮູ້, ນັກສຶກສາທີ່ເປັນກຳແຮງຂອງສັງຄົມເພື່ອໃຫ້ນັກຮຽນ-ນັກສຶກສາມີແນວຄິດໝັ້ນຄົງເຊັ່ນ: ມີທັດສະນະຄະຕິ, ມີຫຼັກໝັ້ນທາງການເມືອງ, ຄວາມຮັກຊາດຕົນເອງ. ດັ່ງນັ້ນ, ມະນຸດທຸກຄົນຕ້ອງມີຄວາມຮູ້ທາງປະຫວັດສາດເພາະວ່າປະຫວັດສາດເປັນແຫຼ່ງປະສົບການອັນມີຄຸນຄ່າຊ່ວຍໃຫ້ຄົນເຮົາຮູ້, ເຂົ້າໃຈເຖິງທຳມະຊາດແລະຂອບເຂດຈຳກັດຂອງມະນຸດ. ນອກຈາກນີ້, ຍັງສາມາດນຳໃຊ້ປະສົບການໃນອະດີດມາພັດທະນາຊີວິດ, ພັດທະນາສັງຄົມໃຫ້ກ້າວໄປສູ່ອະນາຄົດທີ່ດີຂຶ້ນ (PHANHTHAPHA, 2020).

ເປັນທີ່ແນ່ນອນຢູ່ແລ້ວວ່າການພັດທະນາການສຶກສາໃນລະດັບສາມັນສຶກສາລວມເຖິງການສຶກສາຂັ້ນສູງບໍ່ວ່າຈະເປັນການສຶກສາໃນພາກລັດ ຫຼື ເອກະຊົນໃນປະເທດຂອງພວກເຮົາໃຫ້ມີຄຸນນະພາບແມ່ນຕ້ອງໄດ້ມີການປັບປຸງວິທີການຮຽນ-ການສອນໃຫ້ສອດຄ່ອງກັບແຜນນະໂຍບາຍການສຶກສາ ຂອງລັດຖະບານວາງອອກ ໂດຍອີງໃສ່ 3 ລັກສະນະ, 5 ຫຼັກມູນ ແລະ 4 ບຸກທະລຸຂອງກະຊວງສຶກສາທິການ ແລະ ກິລາຄືດັ່ງລຸ່ມນີ້:

3 ລັກສະນະ: ລັກສະນະຊາດ, ລັກສະນະທາງວິທະຍາ ສາດ ແລະ ທັນສະໄໝ, ແລະ ລັກສະນະມະຫາຊົນ.

5 ຫຼັກມູນ: ປັນຍາສຶກສາ, ຄຸນສົມບັດສຶກສາ, ສິລະປະສຶກສາ, ແຮງງານສຶກສາ ແລະ ພາລະສຶກສາ.

4 ບຸກທະລຸ: ບຸກທະລຸທາງດ້ານແນວຄິດ ແລະ ຈິນຕະນາການ, ບຸກທະລຸທາງດ້ານການພັດທະນາທາງຊັບພະຍາ ກອນ, ບຸກທະລຸທາງດ້ານກົນໄກການຄຸ້ມຄອງ, ນິຕິກຳທາງດ້ານການບໍລິຫານ ແລະ ບຸກທະລຸທາງດ້ານການລົບລ້າງຄວາມທຸກຍາກ.

ສິ່ງທີ່ກ່າວມາທັງໝົດນັ້ນ ແມ່ນມີຈຸດປະສົງເພື່ອໃຫ້ການຮຽນຂອງນັກຮຽນທຸກໆຄົນມີຄຸນນະພາບດີຂຶ້ນເທື່ອລະກ້າວ. ແຕ່ຄວາມຈິງແລ້ວ, ນອກຈາກຂະບວນການຮຽນ-ການສອນໃນຫ້ອງຮຽນໂດຍອີງຕາມຫຼັກສູດ ແລະ ວິທີສິດສອນຂອງຄູແລ້ວນັກຮຽນທຸກຄົນກໍ່ຍັງຈະຕ້ອງໄດ້ມີຄວາມກະຕືລືລົ້ນຕໍ່ກັບການຮຽນຂອງຕົນເອງເຊັ່ນ: ການເຮັດກິດຈະກຳດ້ວຍຕົນເອງແລະອື່ນໆເຊິ່ງເອີ້ນວ່າ: ສະພາບການຮຽນ-ການສອນ.

ດັ່ງນັ້ນ, ພັກ-ລັດຖະບານເຮົາຈຶ່ງໄດ້ນຳເອົາວິຊາປະຫວັດສາດ ມານຳໃຊ້ເຂົ້າໃນການຮຽນ-ການສອນຢູ່ລະດັບໂຮງຮຽນຊັ້ນປະຖົມ, ມັດທະຍົມຈົນຮອດຂັ້ນມະຫາວິທະຍາໄລໃນທົ່ວປະເທດ. ເຊິ່ງໂຮງຮຽນມັດທະຍົມສາ ທິດຄັງໄຂ ກໍແມ່ນໂຮງຮຽນແຫ່ງໜຶ່ງທີ່ນອນຢູ່ໃນສາຍສາມັນທີ່ຂຶ້ນກັບວິທະຍາໄລຄູຄັງໄຂ, ທີ່ໄດ້ນຳເອົາຕຳລາແລະວິທີສິດສອນປະຫວັດສາດເຂົ້າມາສອນຕາມໂຄງການ-ຫຼັກສູດຂອງກະຊວງສຶກສາທິການ-ກິລາ ເພື່ອເສີມສ້າງໃຫ້ຄົນຮຸ່ນໃໝ່ມີຄວາມເຂົ້າໃຈໃນດ້ານຕ່າງໆຢ່າງມີເຫດມີຜົນເພື່ອສ້າງຄວາມຮູ້ຄວາມສາມາດຂອງນັກຮຽນໃຫ້ທັນກັບຍຸກສະໄໝປັດຈຸບັນ ແລະ ມີແນວຄິດທີ່ທັນສະໄໝໃຫ້ຫຼາຍຂຶ້ນ.

ຍ້ອນເຫດຜົນຂ້າງເທິງນັ້ນຜູ້ວິໄຈຈຶ່ງມີຄວາມສົນໃຈຄົ້ນຄວ້າກ່ຽວກັບ ສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດໃນ ຊັ້ນ ມ5 ທີ່ໂຮງຮຽນມັດທະຍົມສາທິດຄັງໄຂໃນສົກຮຽນ 2022-2023 ທັງນີ້ກໍ່ເພື່ອນຳໄປສຶກສາຫາຈຸດດີ ແລະ ຈຸດທີ່ຍັງຄົງຄ້າງທີ່ຈະຕ້ອງໄດ້ປັບປຸງ ແລະ ແກ້ໄຂສະພາບການຈັດການຮຽນ-ການສອນຂອງຄູ ນອກນັ້ນ, ຍັງເປັນຂໍ້ມູນໃຫ້ແກ່ຄູອາຈານທີ່ສອນປະຫວັດສາດແລະຜູ້ທີ່ຈະເປັນຄູໃນອະນາຄົດນຳໄປປະຕິບັດໃນຕໍ່ໜ້າໃຫ້ດີຂຶ້ນເລື້ອຍໆ. ໂດຍມີຈຸດປະສົງຂອງການຄົ້ນຄວ້າແມ່ນເພື່ອສຶກສາສະພາບການຈັດການຮຽນ-ການສອນຂອງຄູໃນລາຍວິຊາ ປະຫວັດສາດຊັ້ນ ມ5 ທີ່ໂຮງຮຽນມັດທະຍົມຕອນຕົ້ນສາທິດຄັງໄຂສົກຮຽນ 2022-2023.

## 2. ອຸປະກອນ ແລະ ວິທີການ

### 2.1. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ເປັນການສຶກສາແບບປະລິມານໂດຍມີຈຸດປະສົງສຶກສາສະພາບການຈັດການຮຽນ-ການສອນຂອງຄູໃນລາຍວິຊາ ປະຫວັດສາດຊັ້ນ ມ.5 ທີ່ໂຮງຮຽນມັດທະຍົມສາທິດຄັງໄຂ ເຊິ່ງມີຂັ້ນຕອນດຳເນີນການສຶກສາຄື:

1. ຂັ້ນຕອນໃນການສ້າງແບບສອບຖາມຜູ້ວິໄຈ ໄດ້ສຶກສາຄົ້ນຄວ້າຈາກເອກະສານ, ຕຳລາ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງແລ້ວຮອບຮວມຂໍ້ມູນສ້າງເປັນແບບສອບຖາມຂຶ້ນມາ.

2. ກຳນົດປະຊາກອນໄດ້ແກ່ນັກຮຽນມັດທະຍົມສາທິດຄັງໄຂ ຊັ້ນ ມ.5 ມີຈຳນວນ 25 ຄົນ.

3. ສ້າງແບບສອບຖາມຕາມຈຸດປະສົງທີ່ຕັ້ງໄວ້ໃຫ້ມີຂອບເຂດ ແລະ ເນື້ອໃນຄອບຄຸມສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດຊັ້ນ ມ.5 ທີ່ໂຮງຮຽນມັດທະຍົມສາທິດຄັງໄຂ.

### 2.2. ກຸ່ມຕົວຢ່າງ

ການສຶກສາຄັ້ງນີ້ ກຸ່ມເປົ້າໝາຍໃນການຄົ້ນຄວ້າແມ່ນນັກຮຽນມັດທະຍົມສາທິດຄັງໄຂຊັ້ນ ມ5 ມີຈຳນວນ 25 ຄົນ.

### 2.3. ເຄື່ອງມືໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນແບບສອບຖາມການສອນຂອງຄູເຊິ່ງປະກອບມີ 5 ດ້ານ ດັ່ງນີ້:

- **ດ້ານທີ 1:**ເປັນຂໍ້ມູນກ່ຽວກັບ ທັກສະການນຳເຂົ້າສູ່ບົດຮຽນຂອງຄູ ມີຈຳນວນ 3 ຂໍ້.

- **ດ້ານທີ 2:** ເປັນຂໍ້ມູນກ່ຽວກັບທັກສະການຈັດກິດຈະກຳຂອງຄູ ມີຈຳນວນ 8 ຂໍ້.

- **ດ້ານທີ 3**: ເປັນຂໍ້ມູນກ່ຽວກັບທັກສະການໃຊ້ຄຳຖາມຂອງຄູ ມີຈຳນວນ 5 ຂໍ້.

- **ດ້ານມີ 4**: ເປັນຂໍ້ມູນກ່ຽວກັບທັກສະການນຳໃຊ້ສື່ການຮຽນ-ການສອນມີຈຳນວນ 4 ຂໍ້.

- **ດ້ານມີ 5**: ເປັນຂໍ້ມູນກ່ຽວກັບທັກສະການສະຫຼຸບ ແລະ ການປະເມີນມີຈຳນວນ 3 ຂໍ້.

### 2.4 ວິທີເກັບກຳຂໍ້ມູນ

ພາຍຫຼັງທີ່ສ້າງແບບສອບຖາມຮຽບຮ້ອຍແລ້ວຫຼັງຈາກນັ້ນກໍລົງເກັບກຳຂໍ້ມູນ, ດຳເນີນການຮອບຮວມ, ວິເຄາະຂໍ້ມູນຕາມຂັ້ນຕອນໃນການວິໄຈທີ່ໄດ້ກຳນົດໄວ້ ເຊິ່ງກຸ່ມວິໄຈໄດ້ມີວິທີການດຳເນີນການເກັບກຳຮອບຮວມຂໍ້ມູນໂດຍມີຂັ້ນຕອນດຳເນີນງານດັ່ງນີ້:

1. ຜູ້ວິໄຈດຳເນີນການເກັບຂໍ້ມູນໂດຍການແຈກຢາຍແບບສອບຖາມໃຫ້ກັບປະຊາກອນກຸ່ມຕົວຢ່າງທີ່ກຳນົດໄວ້.

2. ຢາຍແບບສອບຖາມໃຫ້ນັກຮຽນ ຊັ້ນ ມ.5 ທີ່ໂຮງຮຽນມັດທະຍົມສາທິດ ເຊິ່ງໄດ້ແບບສອບຖາມຄືນມາທັງໝົດ 25 ສະບັບເທົ່າກັບ 100%.

### 2.5 ວິທີວິເຄາະຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ແມ່ນໄດ້ວິເຄາະຂໍ້ມູນໂດຍໃຊ້ Microsoft Excel ເພື່ອຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຂອງຄະແນນເປັນແຕ່ລະດ້ານ ແລະ ເປັນແຕ່ລະຂໍ້ໂດຍໃຊ້ເກນການແປຄວາມໝາຍຂອງຄ່າສະເລ່ຍດັ່ງນີ້:

ຄ່າສະເລ່ຍ 4.51-5.00 ໝາຍເຖິງ ການປະຕິບັດໃນລະດັບດີຫຼາຍ

ຄ່າສະເລ່ຍ 3.51-4.50 ໝາຍເຖິງ ການປະຕິບັດໃນລະດັບດີ

ຄ່າສະເລ່ຍ 2.51-3.50 ໝາຍເຖິງ ການປະຕິບັດໃນລະດັບປານກາງ

ຄ່າສະເລ່ຍ 1.51-2.50 ໝາຍເຖິງ ການປະຕິບັດໃນລະໜ້ອຍ

ຄ່າສະເລ່ຍ 1.00-1.50 ໝາຍເຖິງ ການປະຕິບັດໃນລະໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

ສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດໃນຂັ້ນມ 5ໂດຍລວມທຸກດ້ານແມ່ນຢູ່ໃນລະດັບດີເຊິ່ງມີຄ່າສະເລ່ຍເທົ່າກັບ 3.52 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.43, ໃນນັ້ນ ໄດ້ສະແດງໃຫ້ເຫັນວ່າ ທັກສະການນາເຂົ້າສູ່ບົດຮຽນຂອງຄູແມ່ນມີການປະຕິບັດໃນລະດັບດີ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.88 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.04, ຕໍ່ມາແມ່ນທັກສະການສະຫຼຸບ ແລະ ການປະເມີນ ສະເລ່ຍເທົ່າກັບ 3.63ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.53.

ທັກສະການນຳເຂົ້າສູ່ບົດຮຽນຂອງຄູ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບດີ ເຊິ່ງມີຄ່າສະເລ່ຍ , ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.88; SD=0.04), ເມື່ອລຽງຕາມລຳດັບຄະແນນສະເລ່ຍແຕ່ຫຼາຍຫາໜ້ອຍໄດ້ແກ່: ການຈັດຕັ້ງຫ້ອງເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=4.04; SD=0.04), ການທົບທວນບົດຮຽນເກົ່າຂອງຄູເໝາະສົມ ແລະ ສອດຄ່ອງກັບບົດຮຽນ, ກິດຈະກຳນຳເຂົ້າສູ່ບົດຮຽນໃໝ່ເປັນໜ້າສົນໃຈ

ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.80; SD=0.03).

ທັກສະການຈັດກິດຈະກຳຂອງຄູ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.32; SD=0.10), ເມື່ອລຽງຕາມລຳດັບຄະແນນສະເລ່ຍແຕ່ຫຼາຍຫາໜ້ອຍສາມອັນດັບທຳອິດໄດ້ແກ່: ຄູໃຫ້ນັກຮຽນລາຍງານເປັນບຸກຄົນ ແລະ ເປັນກຸ່ມ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.34; SD=0.12), ການຈັດກິດຈະກຳຂອງຄູມີຫຼາກຫຼາຍວິທີ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.33; SD=0.10), ຄູໄດ້ໃຫ້ນັກຮຽນມີສ່ວນຮ່ວມໃນການເຮັດກິດຈະກຳເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.33; SD=0.08).

ທັກສະການໃຊ້ຄຳຖາມຂອງຄູໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.34; SD=0.91), ເມື່ອລຽງຕາມລຳດັບຄະແນນສະເລ່ຍແລ້ວເຫັນວ່າ: ຄູໃຫ້ນັກຮຽນມີເວລາໄດ້ຄົ້ນຄິດກ່ອນຕອບຄາຖາມແມ່ນຢູ່ໃນລະດັບດີ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.96; SD=0.82), ຄູຕັ້ງຄຳຖາມມີຄວາມຊັດເຈນ ແລະ ກົງກັບເນື້ອໃນຂອງບົດຮຽນແມ່ນຢູ່ໃລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.44; SD=0.94), ການຕັ້ງຄຳຖາມຂອງຄູຈະແຈ້ງ ແລະ ງ່າຍດາຍ ແມ່ນຢູ່ໃນລະດັບປານກາງຕ່ຳກວ່າໝູ່ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.00; SD=0.89).

ທັກສະການນຳໃຊ້ສື່ການຮຽນ-ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດ ຕະຖານເທົ່າກັບ ($\bar{X}$=3.42; SD= 0.55), ເມື່ອລຽງຕາມລຳດັບຄະແນນສະເລ່ຍແລ້ວເຫັນວ່າ: ຄູນຳໃຊ້ສື່ການສອນໄດ້ຢ່າງຄ່ອງແຄ້ວ ແລະຖືກຕາມຂັ້ນຕອນເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.60; SD=0.49), ຄູຮູ້ໝູນໃຊ້ສື່ຕ່າງໆຢ່າງມີຫົວຄິດປະດິດສ້າງເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.44; SD=0.57), ສື່ສາມາດກະຕຸ້ນໃຫ້ນັກສຶກສາຄູມີຄວາມສົນໃຈເຊິ່ງມີຄ່າສະເລ່ຍ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.36; SD=0.48) ແລະ ອັນດັບສຸດທ້າຍແມ່ນ ຄູນຳໃຊ້ສື່ການສອນຈະແຈ້ງແລະເໝາະສົມກັບເນື້ອໃນຂອງບົດຮຽນ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.28; SD=0.66).

ສະການສະຫຼຸບ ແລະ ການປະເມີນໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບດີ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.63; SD= 0.53), ເມື່ອລຽງຕາມລຳດັບຄະແນນສະເລ່ຍແລ້ວເຫັນວ່າ: ການປະເມີນຜົນສອດຄ່ອງກັບເນື້ອໃນຂອງບົດຮຽນ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.68; SD= 0.61), ການປະເມີນຂອງຄູເໝາະສົມກັບເນື້ອໃນຂອງບົດຮຽນແລະກິດຈະກຳທີ່ໄດ້ເຮັດມາ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.64; SD= 0.50), ອັນດັບສຸດທ້າຍແມ່ນ ການສະຫຼຸບບົດ ຮຽນຂອງຄູສັ້ນກະທັດຫັດ, ນັກຮຽນເຂົ້າໃຈໄດ້ງ່າຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.56; SD= 0.48).

## 4. ວິພາກຜົນ

❖ ທັກສະການນຳເຂົ້າສູ່ບົດຮຽນຂອງຄູສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດໃນຊັ້ນ ມ.5 ໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບດີ ສະແດງວ່າຄູຜູ້ສອນໄດ້ຍຶດຫຼັກການ ແລະ ວິທີສອນ, ວາງແຜນລ່ວງໜ້າ, ກຳນົດຈຸດປະສົງ,ຈຸດພິເສດຂອງນັກຮຽນ. ການສອນຕ້ອງເອົາໃຈໃສ່ສ້າງເນື້ອໃນສິດສອນໃຫ້ເປັນລະບົບຄື: ສິດສອນຕ້ອງເອົາໃຈໃສ່ຄວາມສາມາດ, ຈຸດພິເສດແລະຊ່ຳອາຍຸຂອງນັກຮຽນ, ສິດສອນຕ້ອງຮັບປະກັນລັກສະນະປະຈັກຕາ, ການສິດສອນຕ້ອງເສີມຂະຫຍາຍລັກສະນະຕື່ນຕົວຫ້າວຫັນຂອງນັກຮຽນເຊິ່ງສອດຄ່ອງກັບ VixayIdsara (2535) ໄດ້ໃຫ້ທັດສະນະກ່ຽວກັບຄຸນລັກສະນະທີ່ດີຂອງການຈັດການຮຽນ-ການສອນ ຄວນກຳນົດຈຸດປະສົງໃຫ້ມີຄວາມຊັດເຈນເພື່ອໃຫ້ສາມາດປະເມີນຜົນໄດ້ວ່າຜູ້ຮຽນສາມາດບັນລຸຈຸດໝາຍທີ່ກຳນົດໄວ້ ຫຼື ບໍ່ ແລະ ເພື່ອກະຕຸ້ນໃຫ້ຜູ້ຮຽນມີຄວາມຕັ້ງໃຈ ແລະ ພະຍາຍາມຮຽນ ເພື່ອໃຫ້ສາມາດປະຕິບັດຕາມຈຸດມຸ່ງໝາຍທີ່ໄດ້ກຳນົດໄວ້ໃຫ້ໄດ້ຫຼາຍທີ່ສຸດ.

❖ ທັກສະການຈັດກິດຈະກຳຂອງຄູໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງແລະລະດັບດີບາງຂໍ້ເນື່ອງຈາກກິດຈະກຳດຳເນີນໄປຕາມເວລາທີ່ກຳນົດໄວ້, ການໃຊ້ວິທີສອນສອດຄ່ອງສຳພັນກັບຈຸດປະສົງ

, ເນື້ອໃນ ແລະການວັດຜົນປະເມີນຜົນ, ກິດຈະກໍາການຮຽນ-ການສອນເຝິກໃຫ້ຜູ້ຮຽນເຮັດວຽກທັງແບບຄົນດຽວ ແລະ ແບບເປັນກຸ່ມ, ເປີດໂອກາດໃຫ້ຜູ້ຮຽນໄດ້ຊັກຖາມ ແລະ ສະແດງອອກໃນຊົ່ວໂມງເຊິ່ງສອດຄ່ອງກັບ VONGNOUROD (2542) ກ່າວໄວ້ວ່າ "ອົງປະກອບການຈັດການຮຽນ-ການສອນຈະຕ້ອງປະກອບດ້ວຍເນື້ອໃນວິຊາ, ທັກສະຂະບວນການ ແລະ ການປະເມີນຜົນເຊິ່ງມີອົງປະກອບຍ່ອຍໆໄດ້ແກ່ການກຽມການສອນ,ຈຸດປະສົງຂອງວິຊາ, ເອກະສານປະກອບການສອນ, ຄວາມສາມາດໃນການສອນ, ການຈັດກິດຈະກໍາການສອນ, ການໃຊ້ສື່ການສອນ ແລະ ການປະເມີນຜົນການສອນ". ນອກນັ້ນຍັງສອດຄ່ອງກັບ THIPKHONG (2542)ໄດ້ຮວບຮວມງານວິໄຈກ່ຽວກັບບັນຫາການຮຽນ-ການສອນປະຫວັດສາດ (2521-2542) ມີງານວິໄຈສ່ວນບັນຫາຂອງການຝຶກຫັດຄູພົບວ່າ: ອາຈານສ່ວນໃຫຍ່ສອນໂດຍຍຶດແບບຮຽນ ແລະ ຫຼັກສູດເປັນສໍາຄັນ,ວິທີສອນທີ່ນິຍົມໃຊ້ຫຼາຍຄືການອະທິບາຍແລ້ວໃຫ້ນັກສຶກສາແກ້ບົດເຝິກຫັດ, ນັກສຶກສາມີຄວາມຮູ້ພື້ນຖານບໍ່ພຽງພໍ, ຂາດຄວາມຮັບຜິດຊອບອາຈານນິເທດບໍ່ກວດບັນທຶກການສອນ, ການສັງເກດການສອນບໍ່ຄົບຕາມຂະບວນການ.

❖ ທັກສະການໃຊ້ຄໍາຖາມຂອງຄູໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບປານກາງ ເນື່ອງຈາກວ່າຄູຕັ້ງຄໍາຖາມບໍ່ມີຄວາມຊັດເຈນປານໃດ, ນັກຮຽນມີເວລາໜ້ອຍໄດ້ຄົ້ນຄິດກ່ອນຕອບຄໍາຖາມ ເຊິ່ງສອດຄ່ອງກັບ HUENGSOUVANH (2544) ໄດ້ກ່າວວ່າ ບັນຫາຢ່າງໜຶ່ງໃນການສອນກໍຄື ແນວທາງການຕັດສິນໃຈຈັດການດໍາເນີນການໃຫ້ຜູ້ຮຽນເກີດການປ່ຽນແປງພຶດຕິກໍາຂຶ້ນຕາມຈຸດມຸ່ງໝາຍ ເຊິ່ງການສອນໂດຍທົ່ວໄປຄູມັກມີບົດບາດໃນການຈັດປະສົບການຕ່າງໆ ບໍ່ວ່າຈະເປັນດ້ານເນື້ອໃນ ຫຼື ທັກສະ ແລະ ມີບົດບາດໃນການຈັດປະສົບການເພື່ອການຮຽນ-ການສອນ. ນອກນັ້ນ, ຍັງສອດຄ່ອງກັບ PAENGPRASOPSOD (2546) ໄດ້ເຮັດວິໄຈເລື່ອງ "ບັນຫາການຮຽນການສອນຂອງຄູປະຫວັດສາດໃນພາກຕາເວັນອອກສ່ຽງເໜືອທີ່ເຂົ້າອົບຮົມໂຄງການປະຫວັດສາດ" ພົບວ່າ ບັນຫາໃນການສອນປະຫວັດສາດເກີດຈາກນັກຮຽນມີພື້ນຖານທາງປະຫວັດສາດບໍ່ດີ, ນັກຮຽນບໍ່ສາມາດປະຍຸກຄວາມຮູ້ໄປໃຊ້ໃນການແກ້ໄຂບັນຫາໄດ້, ນັກຮຽນບໍ່ມັກຄິດ, ບໍ່ມັກອ່ານບົດຮຽນດ້ວຍຕົນເອງ, ນັກຮຽນບໍ່ມັກຄົ້ນຄ້ວາບົດຮຽນ, ເນື້ອໃນບົດຮຽນສັບສົນຈື່ເຫດ ການບໍ່ໄດ້, ນັກຮຽນບໍ່ສົນໃຈຮຽນ, ເນື້ອໃນວິຊາທີ່ຮຽນຫຼາຍເກີນໄປ, ລັກສະນະວິຊາຮຽນສັບຊ້ອນ, ສື່ການສອນບໍ່ພຽງພໍ, ເຫດການທີ່ເກີດຂຶ້ນໃນແຕ່ລະໄລຍະແມ່ນສັບສົນຫຼາຍຈື່ຍາກ, ວິຊາຮຽນໜ້າເບື່ອ, ຄູບໍ່ໃຊ້ສື່ການສອນເພື່ອຊ່ວຍໃຫ້ເຂົ້າໃຈ, ບໍ່ມີບັນຍາກາດໃນການສອນ, ວິທີການສອນຂອງຄູບໍ່ໜ້າສົນໃຈ, ຄູບໍ່ເຂັ້ມງວດໃນການເຮັດວຽກບ້ານ.

❖ ທັກສະການນໍາໃຊ້ສື່ການຮຽນ-ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ແລະ ລະດັບດີບາງຂໍ້ ທາງນີ້ກໍ່ຍ້ອນວ່າ ການນໍາໃຊ້ສື່ຂອງຄູບໍ່ທັນໄດ້ດີ ຫຼື ນໍາໃຊ້ສື່ບໍ່ແທດເໝາະກັບບົດຮຽນ ເຊິ່ງສອດຄ່ອງກັບ ໄຊຍົງ ພົນທົມວົງ ໃຫ້ຄວາມໝາຍສື່ການສອນວ່າ ວັດສະດຸອຸປະກອນ ແລະ ວິທີການປະກອບການສອນເພື່ອໃຊ້ເປັນສື່ກາງໃນການສື່ຄວາມໝາຍທີ່ຜູ້ສອນປະສົງຈະສົ່ງ ຫຼື ຖ່າຍທອດໄປຍັງຜູ້ຮຽນໄດ້ຢ່າງມີປະສິດທິພາບ ແລະ ຍັງສອດຄ່ອງກັບ MASENA (2549) ວິໄຈໃນຊັ້ນຮຽນເລື່ອງ "ບັນຫາການຮຽນ-ການສອນປະຫັວດສາດໃນໂຮງຮຽນປະທຸມຣັດພິທະຍາຄົມ" ພົບວ່າບັນຫາໃນການສອນວິຊາປະຫັວດສາດເກີດຈາກນັກຮຽນບໍ່ມັກຄົ້ນຄ້ວາ, ເນື້ອໃນວິຊາທີ່ຮຽນຫຼາຍເກີນໄປ, ນັກຮຽນບໍ່ມັກເຮັດວຽກບ້ານດ້ວຍຕົນເອງ, ສື່ການສອນບໍ່ພຽງພໍນັກຮຽນມີພື້ນຖານບໍ່ດີ, ສັບສົນຈື່ເຫດການໃນປະຫວັດສາດແຕ່ລະໄລຍະບໍ່ໄດ້, ລັກສະນະວິຊາມີເນື້ອໃນສັບສົນ. ຜົນຈາກການສຶກສາງານວິໄຈດັ່ງກ່າວພົບວ່າ ບັນຫາການຮຽນ-ການສອນວິຊາປະຫວັດສາດ, ບັນຫາທີ່ເກີດຂຶ້ນເກີດຈາກອາຈານຜູ້ສອນ ແລະ ຜູ້ຮຽນ, ຈາກຄວາມຄິດເຫັນຂອງນັກສຶກສາພົບວ່າອາຈານສ່ວນໃຫຍ່ສອນໂດຍຍຶດແບບຮຽນ ແລະ ຫຼັກສູດເປັນສໍາຄັນ, ວິທີສອນທີ່ນິຍົມໃຊ້ຫຼາຍຄື: ສອນແບບບັນລະຍາຍອະທິບາຍຕົວຢ່າງແລ້ວໃຫ້ນັກສຶກສາເຮັດບົດເຝິກຫັດ, ວັດ ແລະ ປະເມີນຜົນໂດຍເນັ້ນເນື້ອໃນວິຊາ, ຂະບວນການຮຽນຮູ້, ປະເມີນຜົນຄວາມຈໍາຫຼາຍກ່ວາການນໍາໄປໃຊ້. ສ່ວນບັນຫາຈາກຜູ້ສຶກສາພົບວ່າ: ນັກສຶກສາມີຄວາມຮູ້ພື້ນຖານບໍ່ພຽງພໍ, ຂາດຄວາມຮັບຜິດຊອບ, ບໍ່ມັກຄິດ, ບໍ່ມັກອ່ານບົດຮຽນດ້ວຍຕົນເອງ.

❖ ທັກສະການສະຫຼຸບແລະການປະເມີນຜົນໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບດີ ເນື່ອງຈາກວ່າ ການສະຫຼຸບບົດຮຽນຂອງຄູສັ້ນກະທັດຫັດ,

ນັກຮຽນເຂົ້າໃຈໄດ້ງ່າຍ, ການປະເມີນຂອງສອດຄ່ອງກັບເນື້ອໃນຂອງບົດຮຽນແລະກິດຈະກຳທີ່ໄດ້ເຮັດມາ ເຊິ່ງສອດຄ່ອງກັບ NAAYOUTHAYA (2543) ກ່າວວ່າ "ການຈັດການຮຽນ-ການສອນ ໝາຍເຖິງຂະບວນການປະຕິບັດດ້ານການຮຽນ-ການສອນໃນການສຶກສາເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ຕາມເປົ້າໝາຍທີ່ກຳນົດ ເຊິ່ງອົງປະກອບຂອງການຮຽນ-ການສອນປະກອບດ້ວຍຫຼັກສູດ, ວິທີການຮຽນ-ການສອນ ແລະ ການປະເມີນຜົນ". ນອກນັ້ນຍັງສອດຄ່ອງກັບ MASENA (2549) ວິໄຈໃນຊັ້ນຮຽນເລື່ອງ "ບັນຫາການຮຽນ-ການສອນປະຫວັດສາດໃນໂຮງຮຽນປະທຸມຣັດພິທະຍາຄົມ"ພົບວ່າອາຈານສ່ວນໃຫຍ່ສອນໂດຍຍຶດແບບຮຽນ ແລະ ຫຼັກສູດເປັນສຳຄັນ, ວິທີສອນທີ່ນິຍົມໃຊ້ຫຼາຍຄື: ສອນແບບບັນລະຍາຍ, ອະທິບາຍຕົວຢ່າງແລ້ວໃຫ້ນັກສຶກສາເຮັດບົດເຝິກຫັດ, ວັດ ແລະ ປະເມີນຜົນໂດຍເນັ້ນເນື້ອໃນວິຊາ ແລະ ຂະບວນການຮຽນຮູ້, ປະເມີນຜົນຄວາມຈຳຫຼາຍກ່ວາການນຳໄປໃຊ້.

## 5. ສະຫຼຸບ

ສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາ ປະຫວັດສາດໃນຊັ້ນ ມ5 ດ້ານທັກສະການຈັດກິດຈະກຳຂອງຄູ ແລະ ດ້ານທັກສະການສະຫຼຸບ ແລະ ການປະເມີນໂດຍລວມແມ່ນຢູ່ໃນລະດັບດີ; ສຳລັບດ້ານທັກສະການຈັດກິດຈະກຳຂອງຄູດ້ານທັກສະການໃຊ້ຄຳຖາມຂອງຄູແລະ ດ້ານທັກສະການນຳໃຊ້ສື່ການຮຽນ-ການສອນໂດຍລວມແມ່ນຢູ່ໃນລະດັບປານກາງ

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າ ໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


DOUNGTHONGLA, V. (2008). *A student's guide to teaching and learning.* Khangkhay Teacher Training College.

KHAMTHA, S. (2545). *Studying the learning problems of students in the field of business (sales) at Phetburi College of Vocational Education [*Thesis K.S.M. (Business Studies)], Bangkok: Bandit College, Srinagarinvirot University. Copies of documents.

Malithong, K., & Tsiri, O.L. (2543). *A summary of teaching and learning media.* Lam Kham Thong University.

Malila, S. (1982). *Teaching principles and methods of teaching history.* Aloun Printing.

MASENA, P. (2549). *The problem of learning and teaching history in the school of Pathoumrat,* LamKhamThong University.

Ministry of Education. (1998). *General education primary course. Department of Teacher Training,* Teacher Development Center

Ministry of Education. (1998). *Principles of middle school teaching I.* Department of Teacher Training, Teacher Development Center.

Ministry of Education. (1998). *Test and evaluation. High school teacher formation line 3-year system, 3rd year.* Teacher Training Department, Teacher Development Center.

PHANHTHAPH, B. (2020). *To study the situation of teaching and learning history in the history teacher's line 12+4 year 1 in Khangkhay Teacher Training College. Lesson Stady.* Khangkhay Teacher Training College.

PHABOUDDY, S. (1998). *Teaching method history.* Ministry of Education and Sports Sysavath Printing.

PHOUSALA, R. (2531). *Problems in teaching and learning at the ideal level and solutions in the academic seminar program.* Human Resource Development Center. Bangkok: Bangkok University.

THIPKHONG, S. (2542). *The problem of learning and teaching history.* Bangkok.

SOUTHILERTALOUN, S. (2537). *Social psychology.* Bangkok:Sirixay Printing.

YANGJEIYMOUA, V. (2008). Elementary curriculum and instruction. 9+3 *system, 1st year of primary teacher training.* Ministry of Education, Department of Teacher Training, Teacher Development Center.

YANGJEIYMOUA, V. (2019). *A guide to writing graduate reports and teaching studies.* Khangkhay Teacher Training College.

ຕາຕະລາງທີ 1: ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ສະພາບບັນຫາການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດໃນຊັ້ນ ມ 5 ໂດຍລວມທຸກດ້ານ.

| ລ/ດ | ສະພາບບັນຫາແຕ່ລະດ້ານ | $\bar{X}$ | SD | ຕີຄວາມ |
|---|---|---|---|---|
| 1 | ທັກສະການນໍາເຂົ້າສູ່ບົດຮຽນຂອງຄູ | 3.88 | 0.04 | ດີ |
| 2 | ທັກສະການຈັດກິດຈະກໍາຂອງຄູ | 3.32 | 0.10 | ປານກາງ |
| 3 | ທັກສະການໃຊ້ຄໍາຖາມຂອງຄູ | 3.34 | 0.91 | ປານກາງ |
| 4 | ທັກສະການນໍາໃຊ້ສື່ການຮຽນ-ການສອນ | 3.42 | 0.55 | ປານກາງ |
| 5 | ທັກສະການສະຫຼູບ ແລະ ການປະເມີນ | 3.63 | 0.53 | ດີ |
| | ລວມ | 3.52 | 0.43 | ດີ |

ຕາຕະລາງທີ 2: ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ທັກສະການນໍາເຂົ້າສູ່ບົດຮຽນຂອງຄູໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ທັກສະການນໍາເຂົ້າສູ່ບົດຮຽນຂອງຄູ | $\bar{X}$ | SD | ຕີຄວາມ |
|---|---|---|---|---|
| 1 | ການຈັດຕັ້ງຫ້ອງ | 4.04 | 0.04 | ດີ |
| 2 | ການທົບທວນບົດຮຽນເກົ່າຂອງຄູເໝາະສົມ ແລະ ສອດຄ່ອງກັບບົດຮຽນ | 3.80 | 0.03 | ດີ |
| 3 | ກິດຈະກໍານໍາເຂົ້າສູ່ບົດຮຽນໃໝ່ເປັນໜ້າສົນໃຈ | 3.80 | 0.03 | ດີ |
| | ລວມ | 3.88 | 0.04 | ດີ |

ຕາຕະລາງທີ 3: ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ທັກສະການຈັດກິດຈະກໍາຂອງຄູໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ທັກສະການຈັດກິດຈະກໍາຂອງຄູ | $\bar{X}$ | SD | ຕີຄວາມ |
|---|---|---|---|---|
| 1 | ກິດຈະກໍາດໍາເນີນໄປຕາມເວລາທີ່ກໍານົດໄວ້ | 3.30 | 0.12 | ປານກາງ |
| 2 | ກິດຈະກໍາມີຄວາມຕໍ່ເນື່ອງ | 3.30 | 0.10 | ປານກາງ |
| 3 | ຄູໄດ້ໃຫ້ນັກຮຽນມີສ່ວນຮ່ວມໃນການເຮັດກິດຈະກໍາ | 3.33 | 0.08 | ປານກາງ |
| 4 | ການແນະນໍາເຮັດກິດຈະກໍາຂອງຄູຈະແຈ້ງ ແລະ ເຂົ້າໃຈດີ | 3.31 | 0.11 | ປານກາງ |
| 5 | ການອະທິບາຍບົດຮຽນຂອງຄູຈະແຈ້ງ ແລະ ເຂົ້າໃຈດີ | 3.31 | 0.09 | ປານກາງ |
| 6 | ຄູໄດ້ຟັງຄໍາຄິດເຫັນ, ເປີດໂອກາດ, ໃຫ້ເວລານັກຮຽນໄດ້ຄົ້ນຄິດ | 3.32 | 0.08 | ປານກາງ |
| 7 | ການຈັດກິດຈະກໍາຂອງຄູມີຫຼາກຫຼາຍວິທີ | 3.33 | 0.10 | ປານກາງ |
| 8 | ຄູໃຫ້ນັກຮຽນລາຍງານເປັນບຸກຄົນ ແລະ ເປັນກຸ່ມ | 3.34 | 0.12 | ປານກາງ |
| | ລວມ | 3.32 | 0.10 | ປານກາງ |

ຕາຕະລາງທີ 4: ຄ່າສະເລ່ຍ ຄ່າຜັນປ່ຽນມາດຕະຖານ ແລະ ທັກສະການໃຊ້ຄໍາຖາມຂອງຄູໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ທັກສະການໃຊ້ຄຳຖາມຂອງຄູ | $\bar{X}$ | SD | ຕີຄວາມ |
|---|---|---|---|---|
| 1 | ການຕັ້ງຄຳຖາມຂອງຄູຈະແຈ້ງ ແລະ ງ່າຍດາຍ | 3.00 | 0.89 | ປານກາງ |
| 2 | ຄູໃຫ້ນັກຮຽນມີເວລາໄດ້ຄົ້ນຄິດກ່ອນຕອບຄຳຖາມ | 3.96 | 0.82 | ດີ |
| 3 | ຄູທວນ ຫຼື ປ່ຽນຄຳຖາມ ໃຫ້ງ່າຍລົງເມື່ອນັກຮຽນບໍ່ເຂົ້າໃຈຕອບ | 3.28 | 0.87 | ປານກາງ |
| 4 | ຄູຕັ້ງຄຳຖາມມີຄວາມຊັດເຈນ ແລະ ກົງກັບເນື້ອໃນຂອງບົດຮຽນ | 3.44 | 0.94 | ປານກາງ |
| 5 | ຄູໄດ້ໃຊ້ຄຳຖາມຢ່າງຫຼາກຫຼາຍ (ເປີດ, ປິດ, ເຈາະຈີ້ມແລະບຸກຄົນ) | 3.00 | 1.02 | ປານກາງ |
| | ລວມ | 3.34 | 0.91 | ປານກາງ |

ຕາຕະລາງທີ 5: ຄ່າສະເລ່ຍ ຄ່າຜັນປ່ຽນມາດຕະຖານ ແລະ ທັກສະການນຳໃຊ້ສື່ການຮຽນ-ການສອນໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ທັກສະການນຳໃຊ້ສື່ການຮຽນ-ການສອນ | $\bar{X}$ | SD | ຕີຄວາມ |
|---|---|---|---|---|
| 1 | ຄູນຳໃຊ້ສື່ການສອນຈະແຈ້ງແລະເໝາະສົມກັບເນື້ອໃນຂອງບົດຮຽນ | 3.28 | 0.66 | ປານກາງ |
| 2 | ຄູນຳໃຊ້ສື່ການສອນໄດ້ຢ່າງຄ່ອງແຄ້ວແລະຖືກຕາມຂັ້ນຕອນ | 3.60 | 0.49 | ດີ |
| 3 | ສື່ສາມາດກະຕຸ້ນໃຫ້ນັກສຶກສາຄູມີຄວາມສົນໃຈ | 3.36 | 0.48 | ປານກາງ |
| 4 | ຄູຮູ້ໝູນໃຊ້ສື່ຕ່າງໆຢ່າງມີຫົວຄິດປະດິດສ້າງ | 3.44 | 0.57 | ປານກາງ |
| | ລວມ | 3.42 | 0.55 | ປານກາງ |

ຕາຕະລາງທີ 6: ຄ່າສະເລ່ຍ ຄ່າຜັນປ່ຽນມາດຕະຖານ ແລະ ທັກສະການສະຫຼຸບ ແລະ ການປະເມີນໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ທັກສະການສະຫຼຸບ ແລະ ການປະເມີນ | $\bar{X}$ | SD | ຕີຄວາມ |
|---|---|---|---|---|
| 1 | ການສະຫຼຸບບົດຮຽນຂອງຄູສັ້ນກະທັດຮັດ, ນັກຮຽນເຂົ້າໃຈໄດ້ງ່າຍ | 3.56 | 0.48 | ດີ |
| 2 | ການປະເມີນຂອງຄູເໝາະສົມກັບເນື້ອໃນຂອງບົດຮຽນແລະກິດຈະກຳທີ່ໄດ້ເຮັດມາ | 3.64 | 0.50 | ດີ |
| 3 | ການປະເມີນຜົນສອດຄ່ອງກັບເນື້ອໃນຂອງບົດຮຽນ | 3.68 | 0.61 | ດີ |
| | ລວມ | 3.63 | 0.53 | ດີ |